# ຄົນດີ

(ອ່ານ ເພງສັຣເສີນ 112)

---

"ຈົ່ງສັນເສີນພຣະເຈົ້າເທີ້ນ, ຄົນທີ່ຢຳເກງພຣະເຈົ້າກໍເປັນສຸກ ຄືຜູ້ທີ່ມີຄວາມປີຕິຊົມຊື່ນອັນຫລວງຫລາຍໃນພຣະບັນຍັດຂອງພຣະອົງ" (ເພງສັຣເສີນ 112:1 )

---

ໃນສມັຍນີ້ ເປັນການຍາກຫລາຍທີ່ຈະຊອກຫາຄົນດີທີ່ແທ້ຈິງໄດ້. ແຕ່ວ່າ, ຢ່າງໜ້ອຍ ທີ່ສຸດກໍເປັນສິ່ງນຶ່ງທີ່ປະທັບໃຈຂອງກຸ່ມສັງຄົມທີ່ຊອກຫາຄົນດີເຫມືອນຈອມອັສວິນ (ພຣະເອກ).

ແຕ່ຢ່າງໃດກໍຕາມ, ສ່ວນຫລາຍ, ເຮົາໄດ້ຊອກຫາຄົນດີທີ່ຜິດບ່ອນ. ເມື່ອເຮົາຊອກຫາຄົນ ໃດຄົນນຶ່ງທີ່ເປັນແບບຢ່າງທີ່ດີ ເຮົາໄດ້ຊອກຫາຄົນທີ່ມີ ຊື່ສຽງໃນວົງການກິລາ, ຄົນທີ່ຮັ່ງມີ ເປັນເສດຖີ, ຫລືຄົນທີ່ມີອຳນາດບາດໃຫຍ່ໃນການໃຊ້ມີຊື່ອອກຄຳສັ່ງ ເພື່ອບັງຄັບບັນຊາ ເພາະພວກເຮົາເຫັນວ່າເຂົາເຈົ້າມີຄວາມຊ່ຽວຊານໃນການເປັນຜູ້ນຳ.

ຖ້າເຮົາຫາກຊອກຫາຄົນດີ ຕາມຖານະຂອງຄົນທີ່ກ່າວມາຂ້າງເທິງນີ້ ເຮົາຈະບໍ່ເຫັນບັນດາຜູ້ເຊື່ອໃນພຣະເຈົ້າປາກົດຢູ່ເທິງເວທີທີ່ມີໄຟສະປັອດໄລທ໌ເຍືອງໃສ່ເໝືອນກັບຄົນເຫລົ່ານັ້ນ ແຕ່ເຂົາເຈົ້າຈະຮັບໃຊ້ຊ່ອຍເຫລືອຄອບຄົວ, ໝູ່ເພື່ອນ, ແລະຮັບໃຊ້ພຣະເຈົ້າ ຢ່າງງຽບໆ ໂດຍບໍ່ມີຊື່ສຽງໂດ່ງດັງ.

ໃນພຣະທັມເພງສັຣເສີນ ບົດທີ 112 ເຮົາຈະເຫັນຢ່າງແຈ່ມແຈ້ງໃນຂໍ້ພຣະຄັມພີວ່າ ແມ່ນຫຍັງກັນແທ້ທີ່ນຳພາໃຫ້ຄົນໃດຄົນນຶ່ງເປັນຄົນດີ. ອີງຕາມພຣະທັມເພງສັຣເສີນທີ່ກ່າວໄວ້ວ່າ: "ຈົ່ງສັນເສີນພຣະເຈົ້າເທີ້ນ, ຄົນທີ່ຢຳເກງພຣະເຈົ້າກໍເປັນສຸກ ຄືຜູ້ທີ່ມີຄວາມປີຕິຊົມຊື່ນອັນຫລວງ ຫລາຍໃນພຣະບັນຍັດຂອງພຣະອົງ" (ຂໍ້ທີ 1 ); "ຄວາມສວ່າງຈະສ່ອງແຈ້ງທ່າມກາງຄວາມມືດ ໃຫ້ຄວາມທຽງທັມຂອງພຣະອົງມີພຣະຄຸນ ຊົງພຣະກະຣຸນາແລະຊົງຊອບທັມ" (ຂໍ້ທີ 4 ); "ຄົນ ທີ່ມີຄວາມເມດຕາແລະໃຫ້ກູ້ຢືມ ກໍຢູ່ເຢັນເປັນສຸກ ຄືຜູ້ດຳເນີນວຽກງານຂອງລາວດ້ວຍຄວາມ ຍຸດຕິທັມ" (ຂໍ້ທີ 5 ); " ເພາະຄົນຊອບທັມຈະບໍ່ທໍ້ຖອຍ ຄົນອື່ນຈະລະນຶກເຖິງລາວຢູ່ຕລອດໄປ" (ຂໍ້ທີ 6 ).

ທ່ານກຳລັງຊອກຫາຄົນດີແມ່ນບໍ່? ທ່ານຈະພົບເຂົາເຈົ້າເຫລົ່ານັ້ນຖົມເຖໄປໃນສັງຄົມ, ແຕ່ທ່ານຈະບໍ່ພົບຄົນທີ່ເຊື່ອໃນພຣະເຈົ້າ ເມື່ອເຂົາເຈົ້າບໍ່ແມ່ນຄົນທີ່ເຊື່ອໃນພຣະເຈົ້າແລ້ວເຮົາຈະຖືເອົາເປັນແບບຢ່າງທີ່ດີ ໄດ້ຢ່າງໃດ? ຂໍໃຫ້ເຮົາອ່ານໃນພຣະທັມ ບົດເພງສັຣເສີນ ບົດທີ 112 ອີກຄັ້ງນຶ່ງ. ນັ້ນແຫລະ ຄືແບບຢ່າງທີ່ດີ ທີ່ຄຣິສຕຽນທັງຊາຍແລະຍິງຄວນຈະຖືເອົາເປັນແບບຢ່າງ ແລະຄວນຈະຕິດຕາມເຂົາເຈົ້າ. ຖ້າຫາກວ່າຄຣິສຕຽນຢາກໃຫ້ໂລກນີ້ມີການປ່ຽນແປງໃນທາງທີ່ດີ.

---

ຖ້າທ່ານຢາກປ່ຽນແປງໂລກໃຫ້ດີຂຶ້ນ ທ່ານຕ້ອງຍອມໃຫ້ພຣະເຢຊູປ່ຽນແປງຊີວິດທ່ານ ໃຫ້ດີຂຶ້ນເສັຽກ່ອນ.

---

ຮຽບຮຽງຈາກ ອາວເດລີເບຣດ